# ຮັກເຂົາຂ້າງດຽວ

ໂດຍະ ບ່າວຫຼັກເຈັດ

ນາງເອີຍ  ສັງເປັນຄົນໃຈນ້ອຍ    ຄອຍເອົາແຕ່ງອນງໍ   ແທ້ດໍ
ພໍອ້າຍລອງຫົວໃຈ    ຄຶດຮອດຫຼາຍສ່ຳໃດແທ້
ບໍ່ແມ່ນຫາທາງແກ້    ມາແລໃຈກັນເບິ່ງ
ມື້ໃດຄອຍຖ້າເຫິງ    ນ້ອງບໍ່ໂທຕອບອ້າຍ ຢາກຕາຍມ້ອຍ ປ່ອຍໃຈ

ນັ້ນລະ  ຄືກັບຕອນທີ່ອ້າຍ    ວຸ້ນວາຍຮ່ວມຫາບັງອອນ
ບໍ່ອາວອນນ້ອງທຳເສີຍ    ບໍ່ຄິດເລີຍຜູ້ຄອງຖ້າ
ຊ້ຳພັດຫາທາງແກ້    ສຽງແວໆ ແຜດໃສ່
ຊັ້ງອ້າຍນັ້ນບໍ່ເຂົ້າໃຈ  ຄວາມທຶງຫວງລື່ນບ້ານ  ຄືຊິຢ້ານແຕ່ນ້ອງຫຼົງ  ແທ້ນໍ

ວັນນັ້ນນ້ອງຮ້ອງດັງປີ້ງໆ    ທັງເອີ້ນສົ່ງສຽງແຂງ
ສະແດງເຄັ້ນຄືເກືອ    ເບື່ອອ້າຍເດທຶງ ຫວງ ໂພດ
ກ້ຽວ ໂກດສຽງແຂງຫ້ອນ    ຊັ່ງລືບກອນຕອນລົມຫມູ່  ວ່າຊັ້ນ
ບອກໃຫ້ປ່ອຍນ້ອງຢູ່ ບໍ່ມີຜູ້ທັກທ້ວງ    ເຮັດຫຮັງລ້ອນແລ້ວແຕ່ໃຈ

ວານນີ້ ນ້ອງພັດຍັງບອກໄວ້    ບໍ່ຍອມຮ່ວມສັນຍາ  ອີກແລ້ວ
ເພາະຢ້ານເສັຽສັຈຈະ    ບາດຮັກສາບໍ່ຄົງຫມັ້ນ
ຄຳສາບານບໍ່ມີໄດ້    ຢ້ານຄາໃຈບາດຢາກປ່ຽນ   ວ່າເດ
ດຽວນີ້ໂລກຫມຸນວຽນ   ປ່ຽນໃຈຄົນຊູ່ມື້   ຈົນຫູອື້ ເມື່ອໄດ້ຟັງ

ນາງເອີຍ    ສັງບໍ່ຄືແຕ່ຄັ້ງ    ຕອນຍັງໃຫມ່ເຮົາຄວນຮັກ   ກັນນໍ
ມອບຫມາຍປັກຊີວິດ    ຢູ່ຊິດຄຽງກັບອ້າຍ
ເກືອບທຸກວັນແຕ່ຮົບຮ້າຍ    ຜິດໃຈເຈົ້າທຸກຢ່າງ   ແທ້ດໍ
ສຸດແຕ່ອ້າຍຫາທາງ  ຖືກໃຈນາງຮອບດ້ານ ແຕ່ປານນັ້ນ ນ້ອງບໍ່ແຄຮ໌

ດຽວນີ້ ອ້າຍເປັນຄົນຍອມແພ້    ສຸດແລ້ວແຕ່ນາງຈະເຮັດ

ສາວຜະເດັດການຊິງຊັງ　　ອ້າຍນັ່ງຟັງບໍ່ຖຽງນ້ອງ
ຢາກລອງດູໃຈເຈົ້າ　　ອ້າຍຂໍເຊົາຫມົດທຸກຢ່າງ
ເຊົາຮອດຄວາມຫຶງຫວງ　ຈະບໍ່ທັກບໍ່ທ້ວງ　ບໍ່ເປັນບ້ວງທ່ວງຄໍ　ເຈົ້າແລ້ວ

ສາວເອີຍ　ທຸກວັນອ້າຍຍອມງໍ້　　ຍໍນ້ອງຢູ່ເທິງຫົວ　ພຸ້ນໃດ
ຢາກເປັນຜົວຍິງຄົນຮັກ　　ນ້ອງຜັກໃສຫນີຊໍ້າ
ນ້ອງໃຈດຳກັບອ້າຍ　　ພໍຢາກຕາຍຍາມນ້ອງໄລ່
ມີແຕ່ຫາທາງໄປ　ບໍ່ອາລັຍດີ້ໆ　ຄືເຮົານີ້ບໍ່ແມ່ນຄົນ　ນີ້ແລ້ວ

ຍ້ອນວ່າ　ອ້າຍຮັກຫຼາຍຈຶ່ງຍອມຫມີ້ນ　ທົນນ້ອງຍ່ຳຍີໃຈ
ເສັຽດາຍຄວາມຫຼັງຮັກ　　ຍາກທີ່ຫາທຽມໄດ້
ພໍຢາກຕາຍໃຫ້ມັນແລ້ວ　　ແນວໂຕເອງບໍ່ມີຄ່າ
ເຂົາຄົງສົມນ້ຳຫນ້າ　　ເຮົາເປັນບ້າ ຮັກຜູ້ດຽວ　ສົມແລ້ວ...